14/- ເມືອງກະມຸທາສັຍ

15/- ເມືອງຫລົ່ມສັກ

16/- ເມືອງຂອນແກ່ນ

ເມືອງຂຶ້ນຕໍ່ເມືອງໃຫຍ່ເຫລົ່ານີ້ ມີ 36 ເມືອງ.

**3. ຫົວເມືອງລາວພຸງຂາວ** ແມ່ນອານາເຂດ ນະຄອນຫລວງພຣະບາງ ໂຮມທັງແຂວງ 12 ພັນນາລື້ 12 ຈຸໄທ ຫົວພັນທັງຫ້າ ທັງຫົກ (ແຂວງຊໍາເຫນືອ) ກັບບັນດາຫົວເມືອງເຫລົ່ານີ້ ໂຮມຮຽກວ່າ "*ຫົວເມືອງລາວພຸງຂາວ*" ພຣະເຈົ້າແຜ່ນດິນສຍາມ ໂຜດໃຫ້ ພຣະຍາຣິດທີຣົງຣົນເສດ ມາເປັນຂ້າຫລວງປະຈໍາຢູ່ນະຄອນຫລວງພຣະບາງ.

4.- ຫົວເມືອງລາວກາງ ຫົວເມືອງລາວຝ່າຍກາງແຕ່ກ່ອນນັ້ນເອງ. ຫົວເມືອງລາວກາງນີ້ ມີເມືອງໃຫຍ່ 3 ເມືອງ ແລະ ເມືອງຂຶ້ນ 12 ເມືອງ ຕາມເດີມຫົວເມືອງລາວກາງ ແມ່ນກຣົມຫມື່ນສັພສິດທິປະສົງ ເປັນຂ້າຫລວງ ຕັ້ງສໍານັກງານວ່າການຢູ່ເມືອງນະຄອນຣາຊສີມາ.

ຫົວເມືອງລາວທັງຫລາຍທີ່ກ່າວນີ້ ທັງທີ່ຢູ່ທາງຝັ່ງຂອງກ້ໍາຂວາ ຕລອດເຖິງເມືອງນະຄອນຣາຊສີມາ ແລະ ຢູ່ທາງຝັ່ງກ້ໍາຊ້າຍ ຕລອດເຖິງແຂວງ 12 ຈຸໄທ ແລະ ແຂວງ 12 ພັນນາ ສຍາມຮຽກວ່າ "*ຫົວເມືອງລາວຊັ້ນນອກ*" ຄົນລາວທີ່ຢູ່ໃນແຜ່ນດິນຕາມທີ່ກ່າວມານີ້ ກໍຮຽກວ່າ "*ລາວນອກ*" ສ່ວນ "*ຫົວເມືອງລາວຊັ້ນໃນ*" ແລະ "*ລາວໃນ*" ນັ້ນ ສຍາມກໍານົດເອົາຄົນລາວທີ່ຖືກກວາດຕ້ອນໄປຕັ້ງຖິ່ນຖານຢູ່ໃນເຂດຂອງກຸງສີອະຍຸທຍາແຕ່ເກົ່າ ຫລື ເຂດກຸງເທບ ຄື:

1. ຄົນລາວທີ່ຖືກກວາດໄປແຕ່ປີ ຄ.ສ. 1778-1779 ໃນເວລາສຍາມຂຶ້ນມາຕີໄດ້ນະຄອນວຽງຈັນຄັ້ງແຣກ ແລະ ປີ ຄ.ສ. 1829 ໃນສມັຍຂອງ ພຣະເຈົ້າອະນຸວົງ.

ຄົນລາວພວກນີ້ ສຍາມໃຫ້ໄປຕັ້ງບ້ານເຮືອນຢູ່ແຂວງລົບບຸຣີ , ເມືອງສຣະບຸຣີ, ເມືອງປຣາຈີນບຸຣີ (ກວາດໄປຈາກເມືອງສະກົນນະຄອນ) ເມືອງເພັຊບຸຣີ, ເມືອງພະນັດນິຄົມ (ກວາດໄປຈາກຊຽງຂວາງ ແລະ ນະຄອນພະນົມ).

2. ຄົນລາວທີ່ອົພຍົບໄປເອງ (ກ່ອນພຣະເຈົ້າອະນຸວົງທໍາການກູ້ອິສຣະພາບ) ລາວພວກນີ້ແມ່ນຊາວເມືອງນະຄອນພະນົມ ໂດຍມີອຸປຣາດເມືອງນະຄອນພະນົມ ເປັນຫົວຫນ້າພາໄປ ມີປະມານ 2.000 ຄົນປາຍ. ຕົ້ນເຫດທີ່ອົພຍົບໄປ ເພາະອຸປຣາດ ກັບເຈົ້າເມືອງນະຄອນພະນົມບໍ່ຖືກກັນ ອຸປຣາດຈຶ່ງພາຄອບຄົວບ່າວໄພ່ຂອງຕົນ ອົພຍົບຫນີໄປໃຫ້ພົ້ນເຂດອໍານາດຂອງເຈົ້າເມືອງ ແລ້ວຂໍຂຶ້ນສ່ວຍ